# ບົດສັງລວມໂຄງການຫຍໍ້
# ໂຄງການພັດທະນາເນື້ອທີ່ດິນໜອງອໍ້, ຢູ່ບ້ານໂນນແກ້ວ,
# ບ້ານໂນນສະຫວ່າງ, ບ້ານດ່ານຄໍາ, ບ້ານເກົ້າລ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ
# ຂອງບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈໍາກັດ

*ທີ່ສະເໜີຕໍ່ : ກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບພະແນການ, ອົງການລັດທຽບເທົ່າພະແນກ ຂັ້ນ ນະຄອນຫຼວງວຽງຈັນ ແລະ ເມືອງທີ່ກ່ຽວຂ້ອງ ຄັ້ງທີ 42 ສະໄໝ VII, ຄັ້ງວັນທີ 25 ພະຈິກ 2024*

*ຮຽນ : - ທ່ານ ເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*– ທ່ານ ຮອງເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*–ບັນດາທ່ານ ເຈົ້າເມືອງ, ຫົວໜ້າພະແນກ, ຮອງພະແນກ ທີ່ນັບຖືຢ່າງສູງ;*

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານຂໍ້ທິດຊີ້ນໍາກ່ຽວກັບໂຄງການພັດທະນາ ໜອງອໍ້ ຂອງ ບໍລິສັດ ພັດທະນາອະສັງຫາລິມະຊັບ ຫົວມັງກອນ ຈໍາກັດ ມາຍັງທ່ານຊາບດັ່ງນີ້:

1) ສະພາບລວມຂອງໂຄງການ:

ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈໍາກັດ ແລະ ບໍລິສັດ ໂອໂຕມາກ ຂາເຂົ້າ-ຂາອອກ ຈໍາກັດ ໄດ້ເຊັນສັນຍາ ວ່າດ້ວຍການສໍາປະທານໂຄງການພັດທະນາເນື້ອທີ່ດິນໜອງອໍ້, ຢູ່ບ້ານໂນນແກ້ວ, ບ້ານໂນນສະຫວ່າງ, ບ້ານດ່ານຄໍາ, ບ້ານເກົ້າລ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ກັບອົງການປົກຄອງ ນະຄອນຫຼວງວຽງຈັນ ຕາງໜ້າໂດຍ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໃນຄັ້ງວັນທີ 21 ມັງກອນ 2016 ເພື່ອພັດທະນາດິນຕອນນີ້ໃຫ້ມີຄວາມສະອາດຈົບງາມ, ເປັນເຂດພັດທະນາທີ່ມີຄວາມສົມດູນດ້ານການທ່ອງທ່ຽວທໍາມະຊາດ, ສູນການຄ້າ, ບ້ານຈັດສັນ, ອາພາດເມັ້ນ, ໂຮງແຮມ, ໂຮງຮຽນ, ເຂດຂຽວ ແລະ ອ່າງພັກນໍ້າ.

ພາຍຫຼັງທີ່ເຊັນສັນຍາສໍາປະທານ, ບໍລິສັດກໍ່ໄດ້ມີການອອກແບບແຜນຜັງຂອງໂຄງການ ແຕ່ເນື່ອງຈາກເສັ້ນທາງເຂົ້າ-ອອກ ຂອງໂຄງການພັດທະນາໜອງອໍ້ ມີຢູ່ເສັ້ນທາງດຽວຄື ຜ່ານຕອນດິນຂອງ ທະນາຄານແຫ່ງ ສປປ ລາວ, ບໍລິສັດ ພັດທະນາອະສັງຫາລິມະຊັບ ຫົວມັງກອນ ຈໍາກັດ ຈຶ່ງສະເໜີມາຍັງ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ແລະ ໄດ້ນໍາເຂົ້າພິຈາລະນາໃນກອງປະຊຸມ ຄລທ.ນວ ຄັ້ງທີ 27 ໃນວັນທີ 25 ຕຸລາ 2019 ເຊິ່ງໄດ້ຕົກລົງເປັນເອກະພາບກັນເຫັນດີເອົາດິນທີ່ຢູ່ໃນເຂດພັດທະນາໜອງອໍ້ຊົດເຊີຍໃຫ້ ທະນາຄານແຫ່ງ ສປປ ລາວ ໃນອັດຕາສ່ວນດິນຂອງທະນາຄານ ແຫ່ງ ສປປ ລາວ 01 ຕາແມັດ ຕໍ່ດິນເຂດພັດທະນາໜອງອໍ້ 03 ຕາແມັດ.

ມາຮອດວັນທີ 10 ພະຈິກ 2021 ໄດ້ເຊັນສັນຍາດັດແກ້ ແລະ ເພີ່ມເຕີມ ໂດຍດັດແກ້ມາເປັນ ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈໍາກັດ ລົງທຶນ 100% ແລະ ດັດແກ້ເນື້ອທີ່ດິນຈາກ 242.000 ຕາແມັດ ເຫຼືອ 235.708 ຕາແມັດ ຕາມເນື້ອທີ່ດິນທີ່ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ໄດ້ອອກໃບຕາດິນລັດ ສະບັບເລກທີ 322, ລົງວັນທີ 10 ກຸມພາ 2021;

**2) ການຄົ້ນຄວ້າຜ່ານມາ:**

ໃນວັນທີ 15 ທັນວາ 2022, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບພະແນການທີ່ກ່ຽວຂ້ອງ, ເມືອງສີໂຄດຕະບອງ ແລະ ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈໍາກັດ ລົງຕິດຕາມ, ກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການສໍາປະທານໂຄງການດັ່ງກ່າວ. ຜ່ານການລົງໄປປະເມີນໂຄງການຕົວຈິງເຫັນວ່າ:

- ***<u>ໜ້າວຽກທີ່ບໍລິສັດປະຕິບັດໄດ້ປະກອບມີ:</u>***

(1) ໄດ້ສຳເລັດການກໍ່ສ້າງສຳນັກຫ້ອງການ ແລະ ສູນບໍລິຫານລູກຄ້າຂອງບໍລິສັດ;

(2) ໄດ້ຮັບໃບອະນຸຍາດລົງທຶນ ໂດຍສ້າງຕັ້ງ ບໍລິສັດ ພັດທະນາ ດາກ້ອນມູນເລກ ຈຳກັດ ເປັນບໍລິສັດ ຄຸ້ມຄອງ ແລະ ບໍລິຫານໂຄງການ;

(3) ສຳເລັດການຊົດເຊີຍທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ ໃຫ້ພາກລັດ;

(4) ໄດ້ຮັບໃບຕາດິນລັດ ສະບັບເລກທີ 322, ລົງວັນທີ 10 ກຸມພາ 2021;

(5) ສຳເລັດການສ້າງບົດວິພາກເສດຖະກິດ-ເຕັກນິກ, ແຜນຜັງກໍ່ສ້າງ, ແຜນແມ່ບົດ, ແຜນນຳໃຊ້ດິນລວມຂອງ ໂຄງການ ແລະ ສ້າງແຜນດຳເນີນງານກິດຈະການຕ່າງໆ ຜ່ານການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

➢ **<u>ໜ້າວຽກທີ່ຍັງຄ້າງຄາປະກອບມີ:</u>**

(1) ຍັງບໍ່ໄດ້ລົງມືກໍ່ສ້າງບັນດາກິດຈະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 1, ມາດຕາ 6 ຂອງສັນຍາສຳ ປະທານ;

(2) ຍັງບໍ່ນຳເຂົ້າທຶນເຂົ້າມາພັດທະນາໂຄງການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 07 ຂອງສັນຍາສຳປະທານ;

ເພື່ອເປັນການສືບຕໍ່ການຈັດຕັ້ງປະຕິບັດສັນຍາສຳປະທານໂຄງການ, ມອບໃຫ້ບໍລິສັດ ພັດທະນາອະສັງຫາລິ ມະຊັບຫົວມັງກອນ ຈຳກັດ ປະຕິບັດດັ່ງນີ້:

- ໃຫ້ນຳເຂົ້າທຶນມາພັດທະນາໂຄງການຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 54 ຂອງກົດໝາຍວ່າດ້ວຍການສົ່ງ ເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ໃຫ້ປະສານສົມທົບກັບ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ເມືອງສີໂຄດ ຕະບອງ ເພື່ອລ້ອມຮົ້ວຂອບເຂດຂອງໂຄງການ ເພື່ອປ້ອງກັນບໍ່ໃຫ້ປະຊາຊົນເຂົ້າໄປບຸກລຸກທີ່ດິນ;
- ໃຫ້ບໍລິສັດປັບປຸງບົດວິພາກເສດຖະກິດ-ເຕັກນິກ, ແບບແຜນຜັງພັດທະນາຂອງໂຄງການ, ລະບົບບໍລິຫານ ຈັດການນ້ຳ ຕາມການສະເໜີຂອງບໍລິສັດວ່າຈະມີການປັບປຸງແບບແຜນຜັງຂອງການໃໝ່ ເພື່ອສະເໜີ ຕໍ່ພະແນກການທີ່ກ່ຽວຂ້ອງ ພິຈາລະນາຮັບຮອງ ຕາມກົດໝາຍ ແລະ ລະບຽບການ;
- ບັນດາໜ້າວຽກຕ່າງໆ ທີ່ໄດ້ມອບໃຫ້ ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈຳກັດ ປະຕິບັດ ແມ່ນໃຫ້ສຳເລັດພາຍໃນ 6 ເດືອນ ນັບແຕ່ມື້ເຊັນບົດບັນທຶກກອງປະຊຸມໃນຄັ້ງນີ້ເປັນຕົ້ນໄປ;

ພາຍຫຼັງການລົງໄປຕິດຕາມ, ກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ ຄັ້ງດັ່ງກ່າວ, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ກໍ່ໄດ້ເຮັດໜັງສືທາງລັດຖະການ ຫາ ບໍລິສັດ ພັດທະນາອະ ສັງຫາລິມະຊັບຫົວມັງກອນ ຈຳກັດ 2 ຄັ້ງ ໃຫ້ລາຍງານການຈັດຕັ້ງປະຕິບັດສັນຍາໂຄງການ ຕາມທີ່ໄດ້ຕົກລົງກັນໃນບົດ ບັນທຶກການລົງຕິດຕາມ, ກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ (ຕາມໜັງສືສະບັບເລກ ທີ 550/ພຜທ.ຫລປ.ນວ, ລົງວັນທີ 15 ມິຖຸນາ 2023 ແລະ ສະບັບເລກທີ 747/ພຜທ.ຫລປ.ນວ, ລົງວັນທີ 11 ສິງຫາ 2023). ຈົນມາຮອດວັນທີ 22 ສິງຫາ 2023 ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈຳກັດ ໄດ້ ເຮັດບົດລາຍງານມາຍັງ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໃນການລາຍງານການຈັດຕັ້ງ ປະຕິບັດໂຄງການດັ່ງກ່າວ (ຕາມບົດລາຍງານສະບັບເລກທີ 018/ບພທ, ລົງວັນທີ 22 ສິງຫາ 2023) ແຕ່ໃນບົດ ລາຍງານດັ່ງກ່າວ, ຍັງບໍ່ທັນສະແດງໃຫ້ເຫັນຄວາມຄືບໜ້າການຈັດຕັ້ງປະຕິບັດໜ້າວຽກ ຕາມທີ່ພາກລັດໄດ້ມອບໝາຍ ໃຫ້ໃນ ບົດບັນທຶກ ຄັ້ງວັນທີ 15 ທັນວາ 2022 ແລະ ເພື່ອໃຫ້ມີຂໍ້ມູນລະອຽດຈະແຈ້ງ, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ຈຶ່ງໄດ້ເຊີນ ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈຳກັດ ເຂົ້າມາລາຍ ງານເພີ່ມເຕີມ 2 ຄັ້ງ (ຕາມໜັງສືເຊີນ ສະບັບເລກທີ 942/ພຜທ.ຫລປ.ນວ, ລົງວັນທີ 10 ຕຸລາ 2023 ແລະ ສະບັບ ເລກທີ 038/ພຜທ.ຫລປ.ນວ, ລົງວັນທີ 19 ມັງກອນ 2024.), ແຕ່ທາງບໍລິສັດກໍ່ບໍ່ເຂົ້າມາຮ່ວມ ແລະ ແຈ້ງມາທາງ ໂທລະສັບວ່າບໍ່ທັນສະດວກເຂົ້າມາຮ່ວມປະຊຸມໄດ້.

ມາໃນວັນທີ 15 ພຶດສະພາ 2024, ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ເຊີນ ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈຳກັດ ເຂົ້າມາປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດສັນຍາສຳປະທານໂຄງການດັ່ງກ່າວ. ຜ່ານການປຶກສາຫາລືຂອງທັງສອງຝ່າຍສາມາດສັງລວມໄດ້ບາງບັນຫາດັ່ງນີ້:

(1) ບໍລິສັດ ພັດທະນາອະສັງຫາລິມະຊັບຫົວມັງກອນ ຈຳກັດ ຂໍໂອກາດໃນການສືບຕໍ່ຈັດຕັ້ງປະຕິບັດໂຄງການດັ່ງກ່າວ, ໂດຍຈະເລີ່ມລົງມືກໍ່ສ້າງບ້ານຈັດສັນ ຈຳນວນ 20 ຫຼັງ ໃຫ້ສຳເລັດພາຍໃນ 9 ເດືອນ, ນັບແຕ່ເດືອນມິຖຸນາ 2024 ເປັນຕົ້ນໄປ ແລະ ຈະນຳສົ່ງແຜນຜັງການກໍ່ສ້າງໂຄງການດັ່ງກ່າວມາຍັງ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ຕາມກົດໝາຍ ແລະ ລະບຽບການ;

(2) ຖ້າບໍລິສັດບໍ່ສາມາດຈັດຕັ້ງປະຕິບັດໂຄງການ ຕາມຂໍ້ທີ 1 ຂ້າງເທິງ, ບໍລິສັດຍິນດີມອບໂຄງການຄືນໃຫ້ ນະຄອນຫຼວງວຽງຈັນ ໂດຍຈະບໍ່ຮຽກຮ້ອງຄ່າໃຊ້ຈ່າຍໃດໆທີ່ໄດ້ນຳໃຊ້ເຂົ້າໃນໂຄງການໃນໄລຍະຜ່ານ ຕໍ່ພາກລັດ;

(3) ບໍລິສັດ ສະເໜີຂໍໃຫ້ພາກລັດ ຊ່ວຍໄກ່ເກ່ຍບັນຫາປະຊາຊົນທີ່ຖືກຜົນກະທົບຈາກໂຄງການ ທີ່ໄດ້ຮັບເງິນຊົດເຊີຍໂຄງການໄປແລ້ວ (ຄອບຄົວ ຕູ້ບຸນສ້ວຍ ໜວຍມະນີ) ແຕ່ຍັງບໍ່ຍອມຍົກຍ້າຍອອກຈາກໂຄງການ.

**3) ການຄົ້ນຄວ້າຂອງພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເຫັນວ່າ:**

1) ໂດຍອີງຕາມສັນຍາສຳປະທານ ເຫັນວ່າ ບໍລິສັດຍັງບໍ່ໄດ້ລົງມືກໍ່ສ້າງບັນດາກິດຈະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 1, ມາດຕາ 6 ຂອງສັນຍາສຳປະທານ ແລະ ຜ່ານການລົງຕິດຕາມ, ກວດກາ ແລະ ປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດສັນຍາ ແລະ ເຊີນມາປຶກສາຫາລືຫຼາຍຄັ້ງກໍ່ໄດ້ໃຫ້ໂອກາດບໍລິສັດສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຍັງຄ້າງຄາ ແຕ່ເຫັນວ່າ ບໍລິສັດກໍ່ຍັງບໍ່ສາມາດປະຕິບັດໜ້າວຽກດັ່ງກ່າວໄດ້.

2) ໂຄງການດັ່ງກ່າວ ແມ່ນນອນໃນຈຳນວນ 40 ໂຄງການ ທີ່ນະຄອນຫຼວງວຽງຈັນ ໄດ້ອອກຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປະເມີນ ແລະ ດຳເນີນມາດຕະການ ການປະຕິບັດສັນຍາໂຄງການລົງທຶນເອກະຊົນ ໃນນະຄອນຫຼວງວຽງຈັນ ຈຳນວນ 40 ໂຄງການ ສະບັບເລກທີ 890/ຈນວ, ລົງວັນທີ 10 ກັນຍາ 2024. ເຊິ່ງປັດຈຸບັນ ຄະນະດັ່ງກ່າວແມ່ນກຳລັງເລີ່ມເຮັດວຽກດັ່ງກ່າວຢູ່.

3) ສຳລັບການສະເໜີຂໍພິຈາລະນາຄືນໃໝ່ການຮັບຮູ້ສິດນຳໃຊ້ຕາມປະເພນີ ເນື້ອທີ່ດິນຈຳນວນ 6.978 ຕາແມັດ ທີ່ນອນໃນເຂດພັດທະນາໜອງອໍ້ ເຫັນວ່າເນື້ອທີ່ດັ່ງກ່າວແມ່ນນອນຢູ່ໃນເຂດພັດທະນາຂອງໂຄງການແທ້ ແລະ ພາກລັດກໍໄດ້ອອກໃບຕາດິນໃຫ້ແກ່ໂຄງການແລ້ວ ຜ່ານມາອົງການປົກຄອງເມືອງກໍໄດ້ດຳເນີນການແກ້ໄຂແລ້ວ ສະເໜີເໜີໃຫ້ ອົງການປົກຄອງເມືອງສືບຕໍ່ແກ້ໄຂ ຕາມກົດໝາຍ.

**ມາຮອດນີ້, ການລາຍງານຂອງຂ້າພະເຈົ້າ** ກ່ຽວກັບໂຄງການພັດທະນາໜອງອໍ້ ຂອງ ບໍລິສັດ ພັດທະນາອະສັງຫາລິມະຊັບ ຫົວມັງກອນ ຈຳກັດ ມາຮອດນີ້ ກໍໄດ້ສິ້ນສຸດລົງແລ້ວ, ສະເໜີຂໍທິດຊີ້ນຳຕາມເຫັນສົມຄວນດ້ວຍ.
ຂໍຂອບໃຈ,